ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 623/ລບ

ນະຄອນຫຼວງວຽງຈັນ, ວັນທີ 02/10/25

# ດຳລັດ
# ວ່າດ້ວຍ ນະໂຍບາຍຕໍ່ຄະນະກິລາທີມຊາດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ກິລາ-ກາຍຍະກຳ ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1670/ສສກ, ລົງວັນທີ 05 ກັນຍາ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ເພື່ອໃຫ້ວຽກງານດັ່ງກ່າວມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ ຊຸກຍູ້, ສົ່ງເສີມ ແລະ ຍົກສູງຖານະບົດບາດ ຂອງຄະນະກິລາທີມຊາດ ໃນລະດັບ ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາກິລາ ຂອງ ສປປ ລາວ ໃຫ້ກ້າວໜ້າ ແລະ ທັນສະໄໝ.

**ມາດຕາ 2 ນະໂຍບາຍຕໍ່ຄະນະກິລາທີມຊາດ**

ນະໂຍບາຍຕໍ່ຄະນະກິລາທີມຊາດ ແມ່ນ ການປະຕິບັດນະໂຍບາຍ ດ້ານ ອັດຕາກິນ, ຄ່າ ພັກເຊົາ, ເດີນທາງ, ເງິນອຸດໜູນແຮງງານ, ການຍ້ອງຍໍ ແລະ ໃຫ້ລາງວັນ, ການປະກັນໄພ ລວມທັງນະໂຍບາຍອື່ນ ສຳລັບການເຄື່ອນໄຫວໃນໄລຍະເວລາ ກະກຽມ, ເຂົ້າຮ່ວມ ແລະ ຫຼັງການແຂ່ງຂັນ ໃຫ້ແກ່ຄະນະກິລາທີມຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

**1. ນັກກິລາປະເພດທີມ** ໝາຍເຖິງ ປະເພດກິລາທີ່ຫຼິ້ນເປັນທີມ ເປັນຕົ້ນ ບານເຕະ, ບານສົ່ງ, ບານບ້ວງ, ຣັກບີ້, ເບສະບອນ ແລະ ປະເພດກິລາອື່ນ;

**2. ນັກກິລາປະເພດໝູ່ຄະນະ** ໝາຍເຖິງ ປະເພດກິລາ ໃດໜຶ່ງ ທີ່ຫຼິ້ນເປັນໝູ່ຄະນະ ເປັນຕົ້ນ ເປຕັງ, ກະຕໍ້, ລອຍນ້ຳ, ແລ່ນ-ລານ ແລະ ປະເພດກິລາອື່ນ;

**3. ນັກຂ່າວກິລາ** ໝາຍເຖິງ ນັກຂ່າວ ຜູ້ທີ່ມີຄວາມຮູ້ທາງດ້ານເຕັກນິກກິລາ ແລະ ໄດ້ຜ່ານການເຫັນດີຈາກການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ເຂົ້າຮ່ວມເກັບກຳຂ່າວກ່ຽວກັບວຽກງານກິລາ-ກາຍຍະກຳ;

**4. ແພດກິລາ** ໝາຍເຖິງ ແພດ ທີ່ໄດ້ຜ່ານການຮຽນຫຼັກສູດ ກ່ຽວກັບແພດກິລາ ທີ່ຈົບຈາກພາຍໃນ ແລະ ຕ່າງປະເທດ ເພື່ອບັນຈຸເປັນ ຄະນະກິລາທີມຊາດ ໃນການເຂົ້າຮ່ວມການແຂ່ງຂັນກິລາ ໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 4 ຫຼັກການ ກ່ຽວກັບການປະຕິບັດນະໂຍບາຍຕໍ່ຄະນະກິລາທີມຊາດ**

ການປະຕິບັດນະໂຍບາຍຕໍ່ຄະນະກິລາທີມຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ລະບຽບການ ແລະ ແຜນຍຸດທະສາດພັດທະນາກິລາ-ກາຍຍະກຳ;
2. ຮັບປະກັນຄວາມສະເໝີພາບ, ຍຸຕິທຳ, ເປີດເຜີຍ, ໂປ່ງໃສ ແລະ ສາມາດກວດສອບໄດ້;
3. ຮັບປະກັນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ຢູ່ ສປປ ລາວ.

## ໝວດທີ 2
## ຄະນະກິລາທີມຊາດ

**ມາດຕາ 6 ຄະນະກິລາທີມຊາດ**

ຄະນະກິລາທີມຊາດ ປະກອບດ້ວຍ ຄະນະນຳ, ຄູຝຶກ, ກຳມະການຕັດສິນ, ນັກກິລາ, ແພດ ແລະ ນັກຂ່າວ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕາມການສະເໜີຂອງສະຫະພັນກິລາແຫ່ງຊາດ ທີ່ກ່ຽວຂ້ອງ.

**ມາດຕາ 7 ຄະນະນຳ**

ຄະນະນຳ ແມ່ນ ຜູ້ທີ່ໄດ້ຮັບການຄັດເລືອກຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ນຳພາ, ບໍລິຫານ ແລະ ຄຸ້ມຄອງ ນັກກິລາທີມຊາດ ໄປເຂົ້າຮ່ວມການແຂ່ງຂັນ ໃນລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 8 ຄູຝຶກທີມຊາດ**

ຄູຝຶກທີມຊາດ ແມ່ນ ຄູຝຶກ ຜູ້ທີ່ໄດ້ຮັບການຄັດເລືອກຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ຮັບຜິດຊອບໃນການ ຄັດເລືອກ, ຝຶກແອບ ແລະ ນຳພາ ນັກກິລາທີມຊາດ ເຂົ້າຮ່ວມການແຂ່ງຂັນກິລາ ໃນລະດັບປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 9 ກຳມະການຕັດສິນ**

ກຳມະການຕັດສິນ ແມ່ນ ກຳມະການຕັດສິນ ຜູ້ທີ່ໄດ້ຮັບການຄັດເລືອກຈາກອົງການຈັດຕັ້ງກິລາ ທີ່ກ່ຽວຂ້ອງ ໃຫ້ຮັບຜິດຊອບເຂົ້າຮ່ວມຕັດສິນການແຂ່ງຂັນກິລາ ປະເພດໃດໜຶ່ງ ໃນລະດັບປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 10 ນັກກິລາທີມຊາດ**

ນັກກິລາທີມຊາດ ແມ່ນ ນັກກິລາທີມຊາດ ຜູ້ທີ່ໄດ້ຮັບການຄັດເລືອກຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ເຂົ້າຮ່ວມການຝຶກແອບ ແລະ ຕາງໜ້າປະເທດ ເຂົ້າຮ່ວມການແຂ່ງຂັນກິລາ ໃນລະດັບປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 11 ແພດ**

ແພດ ແມ່ນ ແພດກິລາ ຜູ້ທີ່ໄດ້ຮັບການຄັດເລືອກຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ຕິດຕາມ ສຸຂະພາບ ແລະ ປະຖົມພະຍາບານ ຄະນະກິລາທີມຊາດ ໃນໄລຍະການແຂ່ງຂັນກິລາ ໃນລະດັບປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 12 ນັກຂ່າວ**

ນັກຂ່າວ ແມ່ນ ນັກຂ່າວກິລາ ຜູ້ທີ່ໄດ້ຮັບການຄັດເລືອກຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ເກັບກຳຂໍ້ມູນ ຂ່າວສານ ກ່ຽວກັບການແຂ່ງຂັນກິລາ ໃນລະດັບປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

## ໝວດທີ 3
## ການປະຕິບັດນະໂຍບາຍ

**ມາດຕາ 13 ປະເພດນະໂຍບາຍ**

ປະເພດນະໂຍບາຍຕໍ່ຄະນະກິລາທີມຊາດ ປະກອບດ້ວຍ:

1. ອັດຕາກິນ, ຄ່າ ພັກເຊົາ, ເດີນທາງ ແລະ ເງິນອຸດໜູນແຮງງານ;
2. ການຍ້ອງຍໍ ແລະ ໃຫ້ລາງວັນ ນັກກິລາທີມຊາດປະເພດບຸກຄົນ;
3. ການ ຍ້ອງຍໍ ແລະ ໃຫ້ລາງວັນ ນັກກິລາທີມຊາດ ປະເພດທີມ ແລະ ໝູ່ຄະນະ;
4. ການ ຍ້ອງຍໍ ແລະ ໃຫ້ລາງວັນ ຄູຝຶກທີມຊາດ;
5. ການຍ້ອງຍໍ ຄະນະນຳ, ກຳມະການຕັດສິນ, ແພດກິລາ ແລະ ນັກຂ່າວກິລາ;
6. ການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
7. ການປະກັນໄພ;
8. ການຮຽນ, ການສຶກສາ ແລະ ການປະຕິບັດໜ້າທີ່;
9. ການສະເໜີເລື່ອນ ຊັ້ນ, ຂັ້ນ ເງິນເດືອນ.

**ມາດຕາ 14 ອັດຕາກິນ, ຄ່າ ພັກເຊົາ, ເດີນທາງ ແລະ ເງິນອຸດໜູນແຮງງານ**

ອັດຕາກິນ, ຄ່າ ພັກເຊົາ ແລະ ເດີນທາງ ສຳລັບ ຄະນະນຳ, ກຳມະການຕັດສິນ, ແພດກິລາ ແລະ ນັກຂ່າວກິລາ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງການເງິນ ວາງອອກ ໃນແຕ່ລະໄລຍະ.

ອັດຕາກິນ ແລະ ເງິນອຸດໜູນແຮງງານ ສຳລັບ ນັກກິລາ ແລະ ຄູຝຶກ ໃຫ້ປະຕິບັດຕາມລະບຽບການຂອງກະຊວງການເງິນ ວາງອອກ ໃນແຕ່ລະໄລຍະ.

ສຳລັບ ນັກກິລາ ແລະ ຄູຝຶກ ໄລຍະການຝຶກແອບກະກຽມເຂັ້ມຂຸ້ນ ໃຫ້ຄິດໄລ່ເພີ່ມ ຊາວສ່ວນຮ້ອຍ (20%) ຂອງອັດຕາກິນ.

ໃນກໍລະນີ ສປປ ລາວ ເປັນເຈົ້າພາບຈັດງານມະຫະກຳກິລາ ລະດັບ ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ໃຫ້ກຳນົດ ໄລຍະຝຶກແອບ ສູງສຸດ ບໍ່ໃຫ້ເກີນ ສິບສອງເດືອນ.

ເງິນອຸດໜູນແຮງງານ ສຳລັບນັກກິລາ ແລະ ຄູຝຶກ ໃນໄລຍະເຂົ້າການຮ່ວມແຂ່ງຂັນ ໃຫ້ຄິດໄລ່ເພີ່ມ ສອງຮ້ອຍສ່ວນຮ້ອຍ (200%) ຂອງອັດຕາກິນ.

ນອກຈາກໄດ້ຮັບອັດຕາກິນ ແລະ ເງິນອຸດໜູນແຮງງານ ຕາມທີ່ໄດ້ກຳນົດໄວ້ເທິງນີ້ ນັກກິລາ ແລະ ຄູຝຶກເພດຍິງ ຍັງຈະໄດ້ຮັບເງິນອຸດໜູນເພີ່ມ ຫ້າສິບສ່ວນຮ້ອຍ (50%) ຂອງອັດຕາກິນ ຕໍ່ຄົນຕໍ່ເດືອນ ໃນໄລຍະຝຶກແອບ ແລະ ເຂົ້າຮ່ວມການແຂ່ງຂັນ.

**ມາດຕາ 15 ການ ຍ້ອງຍໍ ແລະ ໃຫ້ລາງວັນ ນັກກິລາທີມຊາດ ປະເພດບຸກຄົນ**

ນັກກິລາທີມຊາດ ທີ່ໄດ້ຮັບຫຼຽນລາງວັນ ຈະໄດ້ຮັບການ ຍ້ອງຍໍ ແລະ ລາງວັນ ດັ່ງນີ້:

**1. ງານມະຫາກຳກິລາໂອແລມປິກ:**

1.1 ຫຼຽນຄຳ ໄດ້ຮັບຫຼຽນໄຊພິລະອາດຫານ ຊັ້ນ II ແລະ ລາງວັນເປັນເງິນ 350,000,000 ກີບ;

1.2 ຫຼຽນເງິນ ໄດ້ຮັບຫຼຽນໄຊພິລະອາດຫານ ຊັ້ນ III ແລະ ລາງວັນເປັນເງິນ 220,000,000 ກີບ;

1.3 ຫຼຽນທອງ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ແລະ ລາງວັນເປັນເງິນ 140,000,000 ກີບ.

**2. ການແຂ່ງຂັນ ຊີງແຊັມໂລກ ປະເພດກິລາ ທີ່ບັນຈຸ ແລະ ເວີລ໌ເກມ (World Games) ທີ່ບໍ່ບັນຈຸ ຢູ່ໃນລາຍການ ຂອງໂອແລມປິກ:**

2.1 ຫຼຽນຄຳ ໄດ້ຮັບຫຼຽນໄຊພິລະອາດຫານ ຊັ້ນ II ແລະ ລາງວັນເປັນເງິນ 250,000,000 ກີບ;

2.2 ຫຼຽນເງິນ ໄດ້ຮັບຫຼຽນໄຊພິລະອາດຫານ ຊັ້ນ III ແລະ ລາງວັນເປັນເງິນ 150, 000,000 ກີບ;

2.3 ຫຼຽນທອງ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ແລະ ລາງວັນເປັນເງິນ 100,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 15 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

**3. ການແຂ່ງຂັນ ຊີງແຊັມໂລກ ປະເພດກິລາທີ່ບໍ່ບັນຈຸ ລາຍການຂອງໂອແລມປິກ:**

3.1 ຫຼຽນຄຳ ໄດ້ຮັບຫຼຽນໄຊພິລະອາດຫານ ຊັ້ນ III ແລະ ລາງວັນເປັນເງິນ 100,000,000 ກີບ;

3.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ແລະ ລາງວັນເປັນເງິນ 70, 000,000 ກີບ;

3.3 ຫຼຽນທອງ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ແລະ ລາງວັນເປັນເງິນ 50,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 15 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

**4. ງານມະຫາກຳກິລາເອຊຽນເກມ:**

4.1 ຫຼຽນຄຳ ໄດ້ຮັບຫຼຽນໄຊແຮງງານຊັ້ນ I ແລະ ລາງວັນເປັນເງິນ 100,000,000 ກີບ;

4.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານຊັ້ນ II ແລະ ລາງວັນເປັນເງິນ 70,000,000 ກີບ;

4.3 ຫຼຽນທອງ ໄດ້ຮັບຫຼຽນໄຊແຮງງານຊັ້ນ III ແລະ ລາງວັນເປັນເງິນ 50,000,000 ກີບ.

**5. ງານມະຫາກຳກິລາຫາດຊາຍທະວີບອາຊີ, ງານມະຫາກຳກິລາຕໍ່ສູ້ປ້ອງກັນໂຕ ແລະ ກິລາໃນເດີ່ນຮົ່ມ ເຂດທະວີບອາຊີ:**

5.1 ຫຼຽນຄຳ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ແລະ ລາງວັນເປັນເງິນ 50,000,000 ກີບ;

5.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ແລະ ລາງວັນເປັນເງິນ 30,000,000 ກີບ;

5.3 ຫຼຽນທອງ ໄດ້ຮັບຫຼຽນກາແຮງງານ ແລະ ລາງວັນເປັນເງິນ 20,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 12 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

**6. ການແຂ່ງຂັນຊີງແຊ້ມທະວີບອາຊີ ປະເພດກິລາ ທີ່ບັນຈຸ ລາຍການໂອແລມປິກ:**

6.1 ຫຼຽນຄຳ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ແລະ ລາງວັນເປັນເງິນ 70,000,000 ກີບ;

6.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ແລະ ລາງວັນເປັນເງິນ 50,000,000 ກີບ;

6.3 ຫຼຽນທອງ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ແລະ ລາງວັນເປັນເງິນ 30,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 12 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

**7. ການແຂ່ງຂັນຊີງແຊ້ມທະວີບອາຊີ ປະເພດກິລາ ທີ່ບໍ່ບັນຈຸ ລາຍການໂອແລມປິກ:**

7.1 ຫຼຽນຄຳ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ແລະ ລາງວັນເປັນເງິນ 40,000,000 ກີບ;

7.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ແລະ ລາງວັນເປັນເງິນ 30,000,000 ກີບ;

7.3 ຫຼຽນທອງ ໄດ້ຮັບຫຼຽນກາແຮງງານ ແລະ ລາງວັນເປັນເງິນ 20,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 12 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

**8. ງານມະຫາກໍາກິລາຊີເກມ:**

8.1 ຫຼຽນຄໍາ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ແລະ ລາງວັນເປັນເງິນ 50,000,000 ກີບ;

8.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ແລະ ລາງວັນເປັນເງິນ 30,000,000 ກີບ;

8.3 ຫຼຽນທອງ ໄດ້ຮັບຫຼຽນກາແຮງງານ ແລະ ລາງວັນເປັນເງິນ 20,000,000 ກີບ.

**9. ການແຂ່ງຂັນຊິງແຊັມອາຊຽນ ປະເພດກິລາ ທີ່ບັນຈຸ ລາຍການໂອແລມປິກ:**

9.1 ຫຼຽນຄໍາ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ແລະ ລາງວັນເປັນເງິນ 35,000,000 ກີບ;

9.2 ຫຼຽນເງິນ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ແລະ ລາງວັນເປັນເງິນ 20,000,000 ກີບ;

9.3 ຫຼຽນທອງ ໄດ້ຮັບຫຼຽນກາແຮງງານ ແລະ ລາງວັນເປັນເງິນ 15,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 08 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

**10. ການແຂ່ງຂັນຊິງແຊັມອາຊຽນ ປະເພດກິລາ ທີ່ບໍ່ບັນຈຸລາຍການໂອແລມປິກ:**

10.1 ຫຼຽນຄໍາ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ແລະ ລາງວັນເປັນເງິນ 25,000,000 ກີບ;

10.2 ຫຼຽນເງິນ ໄດ້ຮັບຫຼຽນກາແຮງງານ ແລະ ລາງວັນເປັນເງິນ 15,000,000 ກີບ;

10.3 ຫຼຽນທອງ ໄດ້ຮັບໃບຍ້ອງຍໍລັດຖະບານ ແລະ ລາງວັນເປັນເງິນ 10,000,000 ກີບ.

ໃນກໍລະນີ ປະເທດທີ່ເຂົ້າຮ່ວມການແຂ່ງຂັນບໍ່ຮອດ 08 ປະເທດ ເງິນລາງວັນຈະໄດ້ ຫ້າສິບສ່ວນຮ້ອຍ (50%) ຂອງເງິນລາງວັນ.

ສໍາລັບ ລາງວັນທີ່ໄດ້ຮັບເປັນເງິນຂອງ ນັກກິລາ ແລະ ຄູຝຶກທີມຊາດ ຈະໄດ້ຫັກໄວ້ກອງທຶນກິລາ-ກາຍຍະກໍາ ຫົກສ່ວນຮ້ອຍ (6%) ຂອງມູນຄ່າທີ່ໄດ້ຮັບຕົວຈິງ.

ນັກກິລາຄົນພິການທີມຊາດ ນະໂຍບາຍເປັນເງິນລາງວັນ ຈະໄດ້ຮັບເງິນລາງວັນ ເທົ່າກັບ ເຈັດສິບສວນຮ້ອຍ (70%) ຂອງມູນຄ່າລາງວັນ ນັກກິລາປົກກະຕິ ໃນມາດຕາ 15 ຂອງດໍາລັດສະບັບນີ້.

ນັກກິລາທີມຊາດ ຮຸ່ນໜຸ່ມ, ນັກກິລາມະຫາວິທະຍາໄລ ແລະ ນັກກິລານັກຮຽນມັດທະຍົມສຶກສາທີມຊາດ ນະໂຍບາຍເປັນເງິນລາງວັນ ຈະໄດ້ຮັບເງິນລາງວັນ ເທົ່າກັບ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າລາງວັນ ໃນ ມາດຕາ 15 ຂອງດໍາລັດສະບັບນີ້.

**ມາດຕາ 16 ການຍ້ອງຍໍ ແລະ ໃຫ້ລາງວັນ ນັກກິລາທີມຊາດ ປະເພດທີມ ແລະ ໝູ່ຄະນະ**

ນັກກິລາທີມຊາດ ປະເພດທີມ ແລະ ໝູ່ຄະນະ ໄດ້ຮັບລາງວັນເປັນເງິນ ເທົ່າກັບ ສອງສ່ວນສາມ (2/3) ຂອງມູນຄ່າລາງວັນເປັນເງິນ ຂອງນັກກິລາ ປະເພດບຸກຄົນ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 15 ຂອງດໍາລັດສະບັບນີ້.

**ມາດຕາ 17 ການຍ້ອງຍໍ ແລະ ໃຫ້ລາງວັນ ຄູຝຶກທີມຊາດ**

ຄູຝຶກທີມຊາດ ຂອງນັກກິລາທີມຊາດ ປະເພດບຸກຄົນ ແລະ ປະເພດທີມ ທີ່ມີນັກກິລາ ບໍ່ເກີນ ຫົກ ຄົນ ຈະໄດ້ຮັບການຍ້ອງຍໍ ປະເພດຫຼຽນຄືກັນກັບນັກກິລາ ແລະ ໄດ້ຮັບລາງວັນເປັນເງິນ ເທົ່າກັບ ສີ່ສິບສ່ວນຮ້ອຍ (40%) ຂອງລາງວັນເປັນເງິນ ຂອງນັກກິລາ.

ຄູຝຶກທີມຊາດ ຂອງນັກກິລາທີມຊາດ ປະເພດທີມ ທີ່ມີນັກກິລາ ເຈັດ ຄົນຂຶ້ນໄປ ຈະໄດ້ຮັບການຍ້ອງຍໍ ປະເພດຫຼຽນຄືກັນກັບນັກກິລາ ແລະ ໄດ້ຮັບເງິນລາງວັນເທົ່າກັບ ຊາວສ່ວນຮ້ອຍ (20%) ຂອງລາງວັນເປັນເງິນ ຂອງນັກກິລາ.

ຄູຝຶກທີມຊາດ ຂອງນັກກິລາທີມຊາດ ຣຸ່ນໜຸ່ມ, ກິລາມະຫາວິທະຍາໄລ ແລະ ກິລາ ນັກຮຽນມັດທະຍົມສຶກສາ ໄດ້ຮັບການຍ້ອງຍໍ ປະເພດຫຼຽນຄືກັນກັບນັກກິລາ ແລະ ໄດ້ຮັບເງິນລາງວັນ ເທົ່າກັບ ຫ້າສິບສ່ວນຮ້ອຍ (50%) ຂອງລາງວັນເປັນເງິນ ຂອງນັກກິລາ.

**ມາດຕາ 18 ການຍ້ອງຍໍ ຄະນະນຳ, ກຳມະການຕັດສິນ, ແພດກິລາ ແລະ ນັກຂ່າວກິລາ**

ຄະນະນຳ, ກຳມະການຕັດສິນ, ແພດກິລາ ແລະ ນັກຂ່າວກິລາ ຈະໄດ້ຮັບການ ຍ້ອງຍໍ ແລະ ລາງວັນ ດັ່ງນີ້:

1. ຄະນະນຳ ແລະ ກຳມະການຕັດສິນ ທີ່ເຄື່ອນໄຫວ ແລະ ນຳພານັກກິລາທີມຊາດ ເຂົ້າຮ່ວມການແຂ່ງຂັນ ງານມະຫາກຳກິລາໂອແລມປິກ ແລະ ແຂ່ງຂັນລະດັບໂລກ ທີ່ໄດ້ຮັບ ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ ໄດ້ຮັບຫຼຽນນາມມະຍົດນັກພັດທະນາດີເດັ່ນແຫ່ງຊາດ ສຳລັບຄະນະນຳ ແລະ ຫຼຽນໄຊແຮງງານ ຊັ້ນ I ສຳລັບກຳມະການຕັດສິນ;

2. ແພດກິລາ ແລະ ນັກຂ່າວກິລາ ທີ່ເຄື່ອນໄຫວຮ່ວມກັບ ນັກກິລາທີມຊາດ ທີ່ເຂົ້າຮ່ວມການແຂ່ງຂັນ ງານມະຫາກຳກິລາໂອແລມປິກ ແລະ ແຂ່ງຂັນລະດັບໂລກ ທີ່ໄດ້ຮັບ ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ ໄດ້ຮັບຫຼຽນກາແຮງງານ;

3. ຄະນະນຳ ແລະ ກຳມະການຕັດສິນ ທີ່ເຄື່ອນໄຫວ ແລະ ນຳພານັກກິລາທີມຊາດ ເຂົ້າຮ່ວມການແຂ່ງຂັນ ງານມະຫາກຳກິລາເອຊຽນເກມ, ງານມະຫາກຳກິລາຫາດຊາຍທະວີບອາຊີ, ງານມະຫາກຳກິລາຕໍ່ສູ້ປ້ອງກັນຕົວ, ກິລາໃນເດີ່ນຮົ່ມເຂດທະວີບອາຊີ ແລະ ງານມະຫາກຳກິລາຊີເກມ ທີ່ໄດ້ຮັບ ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ສຳລັບຄະນະນຳ ແລະ ຊັ້ນ II ສຳລັບກຳມະການຕັດສິນ;

4. ແພດກິລາ ແລະ ນັກຂ່າວກິລາ ທີ່ເຄື່ອນໄຫວຮ່ວມກັບ ນັກກິລາທີມຊາດ ທີ່ເຂົ້າຮ່ວມການແຂ່ງຂັນ ງານມະຫາກຳກິລາເອຊຽນເກມ, ງານມະຫາກຳກິລາຫາດຊາຍທະວີບອາຊີ, ງານມະຫາກຳກິລາຕໍ່ສູ້ປ້ອງກັນຕົວ, ກິລາໃນເດີ່ນຮົ່ມເຂດທະວີບອາຊີ ແລະ ງານມະຫາກຳກິລາຊີເກມທີ່ໄດ້ຮັບ ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ ໄດ້ຮັບໃບຍ້ອງຍໍລັດຖະບານ.

**ມາດຕາ 19 ການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ການຍ້ອງຍໍ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ອຸປະຖຳ, ປະກອບສ່ວນ ໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນ ໃຫ້ປະຕິບັດຕາມດຳລັດວ່າດ້ວຍ ການແຂ່ງຂັນ ແລະ ຍ້ອງຍໍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ອຸປະຖຳ, ປະກອບສ່ວນ ທາງດ້ານວັດຖຸ ຫຼື ເງິນ ເຂົ້າໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນກິລາ ໄດ້ຮັບການຍ້ອງຍໍ ຕາມມູນຄ່າ ດັ່ງນີ້:

1. ໃບກຽດຕິຄຸນ ສຳລັບການປະກອບສ່ວນທີ່ມີມູນຄ່າ 5,000,000 ກີບ ລົງມາ;
2. ໃບຍ້ອງຍໍຂັ້ນກະຊວງ ສຳລັບການປະກອບສ່ວນທີ່ມີມູນຄ່າ 5,000,001 - 34,000,000 ກີບ;
3. ໃບຍ້ອງຍໍຂັ້ນລັດຖະບານ ສຳລັບການປະກອບສ່ວນທີ່ມີມູນຄ່າ 34,000,001 - 54,000,000 ກີບ;
4. ຫຼຽນກາພັດທະນາ ສຳລັບການປະກອບສ່ວນທີ່ມີມູນຄ່າ 54,000,001 - 119,000,000 ກີບ;
5. ຫຼຽນໄຊພັດທະນາ ຊັ້ນ III ສຳລັບການປະກອບສ່ວນທີ່ມີມູນຄ່າ 119,000,001 - 169,000,000 ກີບ;
6. ຫຼຽນໄຊພັດທະນາ ຊັ້ນ II ສຳລັບການປະກອບສ່ວນທີ່ມີມູນຄ່າ 169,000,001 - 249,000,000 ກີບ;
7. ຫຼຽນໄຊພັດທະນາ ຊັ້ນ I ສຳລັບການປະກອບສ່ວນທີ່ມີມູນຄ່າ 249,000,001 ກີບ ຂຶ້ນໄປ.

**ມາດຕາ 20 ການປະກັນໄພ**

ຄະນະກິລາທີມຊາດ ທີ່ເຂົ້າຮ່ວມການແຂ່ງຂັນໃນລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ຈະໄດ້ຮັບການປະກັນໄພ ທຸກຄັ້ງ.

**ມາດຕາ 21 ການຮຽນ, ການສຶກສາ ແລະ ການປະຕິບັດໜ້າທີ່**

ຄູຝຶກ ແລະ ນັກກິລາ ທີ່ຝຶກແອບ ແລະ ເຂົ້າຮ່ວມການແຂ່ງຂັນ ໄດ້ຮັບ ການໂຈະ ການຮຽນ, ການສຶກສາ ແລະ ການປະຕິບັດໜ້າທີ່ ເພື່ອໃຫ້ໄດ້ເລື່ອນຊັ້ນຮຽນປົກກະຕິ, ໄປສຶກສາຕໍ່ຕ່າງປະເທດ ແລະ ສືບຕໍ່ປະຕິບັດໜ້າທີ່ ຕາມເງື່ອນໄຂຕົວຈິງ ຕາມການແຈ້ງ ຂອງກະຊວງສຶກສາທິການ ແລະ ກິລາ.

ສໍາລັບ ຄ່າໃຊ້ຈ່າຍຄ່າບໍາລຸງໜ່ວຍກິດ ໃຫ້ນໍາໃຊ້ງົບປະມານບໍລິຫານ ຫຼື ລາຍຮັບທາງດ້ານວິຊາການ ຂອງສະຖານການສຶກສາທີ່ກ່ຽວຂ້ອງ.

**ມາດຕາ 22 ການສະເໜີ ເລື່ອນ ຊັ້ນ, ຂັ້ນ ເງິນເດືອນ**

ຄະນະກິລາທີມຊາດ ທີ່ເປັນພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ ຊຶ່ງໄດ້ເຂົ້າຮ່ວມການແຂ່ງຂັນໃນລະດັບ ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ທີ່ມີຜົນງານສ້າງກຽດຊື່ສຽງ ໃຫ້ແກ່ປະເທດຊາດ, ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ສະເໜີ ຕໍ່ການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອພິຈາລະນາ ເລື່ອນ ຊັ້ນ, ຂັ້ນ ເງິນເດືອນ ໃຫ້ແກ່ຄະນະກິລາທີມຊາດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ງົບປະມານ ແລະ ການລະດົມທຶນ

**ມາດຕາ 23 ງົບປະມານ**

ງົບປະມານ ທີ່ນໍາໃຊ້ ໃນການປະຕິບັດນະໂຍບາຍຕໍ່ຄະນະກິລາທີມຊາດ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ກອງທຶນກິລາ-ກາຍຍະກໍາ;
3. ການຊ່ວຍເຫຼືອ ຫຼື ອຸປະຖໍາຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 24 ການລະດົມທຶນ**

ລັດຊຸກຍູ້, ສົ່ງເສີມ ສະມາຄົມກິລາ, ສະຫະພັນກິລາ ແລະ ອົງການຈັດຕັ້ງຕ່າງໆ ລະດົມທຶນທີ່ຖືກຕ້ອງ ຕາມກົດໝາຍ ເພື່ອນໍາໃຊ້ເຂົ້າໃນການປະຕິບັດນະໂຍບາຍ ໃຫ້ແກ່ຄະນະກິລາທີມຊາດ.

## ໝວດທີ 5
## ການຄຸ້ມຄອງ ແລະ ການກວດກາ ວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ

**ມາດຕາ 25 ອົງການຄຸ້ມຄອງ ແລະ ກວດກາ ວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ**

ກະຊວງສຶກສາທິການ ແລະ ກິລາ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ການປະຕິບັດນະໂຍບາຍຕໍ່ຄະນະກິລາທີມຊາດ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ກົດໝາຍ ແລະ ລະບຽບການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ຜັນຂະຫຍາຍກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ແລະ ຊີ້ນຳການຈັດຕັ້ງປະຕິບັດ;

4. ຊີ້ນຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດນະໂຍບາຍຕໍ່ຄະນະກິລາທີມຊາດ;

5. ສະເໜີປະຕິບັດນະໂຍບາຍ ຕໍ່ຄະນະກິລາທີມຊາດ ລວມທັງການຍັ້ງຢືນຜົນງານ ຂອງຄະນະກິລາທີມຊາດ;

6. ລະດົມການຊ່ວຍເຫຼືອ ຫຼື ການອຸປະຖຳຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນແຫຼ່ງທຶນ ສຳລັບນະໂຍບາຍຕໍ່ຄະນະກິລາທີມຊາດ;

7. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ;

8. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບຂະແໜງການສຶກສາທິການ ແລະ ກິລາ ໃນການຈັດຕັ້ງປະຕິບັດວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 28 ເນື້ອໃນການກວດກາ**

ການກວດກາວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ;

3. ການສ້າງ ແລະ ປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 29 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການກວດກາວຽກງານນະໂຍບາຍຕໍ່ຄະນະກິລາທີມຊາດ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ **30 ຕຸລາ 2025** ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**